ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງພະລັງງານ ແລະ ບໍ່ແຮ່

ກົມຄຸ້ມຄອງບໍ່ແຮ່

ເລກທີ 0799 /ພບ.ກຄບ1

ນະຄອນຫຼວງວຽງຈັນ, ວັນທີ 03 MAR 2022

# ສະໃບດນຳສົ່ງ

ເຖິງ: - ທ່ານ ຫົວໜ້າພະແນກພະລັງງານ ແລະ ບໍ່ແຮ່ ປະຈຳແຂວງ/ນະຄອນຫຼວງວຽງຈັນ;

- ທ່ານ ຫົວໜ້າຫ້ອງການພະລັງງານ ແລະ ບໍ່ແຮ່ ປະຈຳເມືອງ ໃນຂອບເຂດທົ່ວປະເທດ;
- ປະທານ/ອຳນວຍການບໍລິສັດ ລົງທຶນດ້ານບໍ່ແຮ່ ໃນຂອບເຂດທົ່ວປະເທດ.

ເລື່ອງ: ນຳສົ່ງເອກະສານ.

- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີ ກະຊວງພະລັງງານ ແລະ ບໍ່ແຮ່ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກົມຄຸ້ມຄອງບໍ່ແຮ່ ສະບັບເລກທີ 136/ພບ, ລົງວັນທີ 25 ມັງກອນ 2022.

ກົມຄຸ້ມຄອງບໍ່ແຮ່ ຂໍນຳສົ່ງເອກະສານມາຍັງທ່ານ ຊຶ່ງເອກະສານນຳສົ່ງມາຄັ້ງນີ້ ປະກອບມີ:

| ລຳດັບ | ເນື້ອໃນເອກະສານ | ຈຳນວນ (ສະບັບ) | ໝາຍເຫດ |
|---|---|---|---|
| 01 | ຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງພະນັກງານ-ລັດຖະກອນ ປະຈຳພາກສະໜາມໂຄງການຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ ສະບັບເລກທີ 315/ພບ, ລົງວັນທີ 16 ກຸມພາ 2022. | 01 | ເພື່ອຊາບ ແລະ ຈັດຕັ້ງປະຕິບັດ. |

ວ່າການຫົວໜ້າກົມ

ແກ້ວສະຫງວນ ວິນນາລາດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງພະລັງງານ ແລະ ບໍ່ແຮ່

ເລກທີ 315 /ພບ

ນະຄອນຫຼວງວຽງຈັນ, ວັນທີ 16.02.2022

# ຂໍ້ຕົກລົງ

## ວ່າດ້ວຍການແຕ່ງຕັ້ງພະນັກງານ-ລັດຖະກອນປະຈຳພາກສະໜາມ ໂຄງການຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ

- ອີງຕາມ ກົດໝາຍວ່າດ້ວຍແຮ່ທາດ ສະບັບເລກທີ 31/ສພຊ, ລົງວັນທີ 3 ພະຈິກ 2017;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງ ພະລັງງານ ແລະ ບໍ່ແຮ່ ສະບັບເລກທີ 624/ນຍ, ລົງວັນທີ 22 ຕຸລາ 2021;
- ອີງຕາມ ໜັງສືສະເໜີຂອງກົມຄຸ້ມຄອງບໍ່ແຮ່ ສະບັບເລກທີ 0543/ກຄແ ລົງວັນທີ 11.02.2022

### ລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່ ອອກຂໍ້ຕົກລົງ:

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ວາງອອກເພື່ອກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການເຄື່ອນໄຫວວຽກງານຂອງພະນັກງານ-ລັດຖະກອນ ປະຈຳຢູ່ພາກສະໜາມ, ເພື່ອຄຸ້ມຄອງ ແລະ ຕິດຕາມກວດກາການດຳເນີນການຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ, ການຊື້-ຂາຍ, ການຂົນສົ່ງ, ການປົກປັກຮັກສາສິ່ງແວດລ້ອມ, ການພັດທະນາຊຸມຊົນ ແລະ ວຽກງານອື່ນທີ່ຕິດພັນກັບກິດຈະກຳບໍ່ແຮ່, ແນໃສ່ຮັບປະກັນການຈັດຕັ້ງປະຕິບັດວຽກງານໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ແລະ ມີຄວາມເປັນເອກະພາບໃນຂອບເຂດທົ່ວປະເທດ.

**ມາດຕາ 2 ການແຕ່ງຕັ້ງ**

ການແຕ່ງຕັ້ງພະນັກງານ-ລັດຖະກອນປະຈຳພາກສະໜາມໂຄງການຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ ແມ່ນການມອບໝາຍໃຫ້ ພະນັກງານ-ລັດຖະກອນ ຂອງຂະແໜງການພະລັງງານ ແລະ ບໍ່ແຮ່ ປະຈຳຢູ່ພາກສະໜາມໂຄງການ.

ກະຊວງພະລັງງານ ແລະ ບໍ່ແຮ່ ຕົກລົງແຕ່ງຕັ້ງພະນັກງານ-ລັດຖະກອນ ໃຫ້ປະຈໍາຢູ່ພາກສະໜາມ ນໍາໂຄງການຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ ທີ່ໄດ້ຮັບອະນຸຍາດສໍາປະທານ ເພື່ອການຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ ໃນ ສປປ ລາວ ປະກອບມີ ດັ່ງນີ້:

1. ຕາງໜ້າກົມຄຸ້ມຄອງບໍ່ແຮ່ ຈໍານວນ 01 ທ່ານ;
2. ຕາງໜ້າພະແນກພະລັງງານ ແລະ ບໍ່ແຮ່ ແຂວງ/ນະຄອນຫຼວງ ຈໍານວນ 01 ທ່ານ;
3. ຕາງໜ້າຫ້ອງການ ພະລັງງານ ແລະ ບໍ່ແຮ່ ເມືອງ/ນະຄອນ ຈໍານວນ 01 ທ່ານ.

**ມາດຕາ 3 ຂອບເຂດການນໍາໃຊ້**

ຂໍ້ຕົກລົງສະບັບນີ້ ນໍາໃຊ້ສໍາລັບພະນັກງານ-ລັດຖະກອນ ຂະແໜງການພະລັງງານ ແລະ ບໍ່ແຮ່ ທີ່ປະຈໍາຢູ່ພາກສະໜາມ ຂອງໂຄງການຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ, ບໍລິສັດ ແລະ ລັດວິສາຫະກິດ ທີ່ດໍາເນີນການຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ ໃນຂອບເຂດທົ່ວປະເທດ.

**ມາດຕາ 4 ໜ້າວຽກຂອງພະນັກງານ-ລັດຖະກອນ ປະຈໍາຢູ່ພາກສະໜາມ**

ພະນັກງານ-ລັດຖະກອນ ປະຈໍາຢູ່ພາກສະໜາມ ຕ້ອງປະຕິບັດໜ້າວຽກຕົ້ນຕໍ ດັ່ງນີ້:

1. ຕິດຕາມກວດກາ ແລະ ເກັບກໍາຂໍ້ມູນກ່ຽວກັບ ການຂຸດຄົ້ນ, ການປຸງແຕ່ງແຮ່ທາດ, ການຊື້-ຂາຍ, ການຂົນສົ່ງ ແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ແລະ ການປະຕິບັດພັນທະທາງດ້ານການເງິນຕໍ່ລັດ;
2. ຕິດຕາມກວດກາ ແລະ ເກັບກໍາຂໍ້ມູນ ການຄຸ້ມຄອງດ້ານສິ່ງແວດລ້ອມ, ຄວາມປອດໄພ, ສຸຂະພາບ ແລະ ການນໍາໃຊ້ແຮງງານ, ການນໍາເຂົ້າອຸປະກອນກົນຈັກ, ພາຫະນະ, ສານເຄມີ ແລະ ວັດຖຸດິບ ທີ່ຕິດພັນກັບການດໍາເນີນໂຄງການ.
3. ຕິດຕາມ ແລະ ເຂົ້າຮ່ວມວຽກງານພັດທະນາຊຸມຊົນ;
4. ເຂົ້າຮ່ວມກອງປະຊຸມຕ່າງໆ;
5. ສັງລວມຂໍ້ມູນ ແລະ ລາຍງານ.

ພະນັກງານ-ລັດຖະກອນທີ່ປະຈໍາການພາກສະໜາມຕ້ອງລົງເລິກ ທາງດ້ານວິຊາການໃຫ້ເລິກເຊິ່ງ ແລະ ສາມາດເຂົ້າເຖິງພື້ນຖານທາງດ້ານເຕັກນິກ-ວິຊາການ.

**ມາດຕາ 5 ເງື່ອນໄຂຂອງພະນັກງານ-ລັດຖະກອນປະຈໍາສະໜາມ**

ພະນັກງານ-ລັດຖະກອນຜູ້ທີ່ຈະຖືກແຕ່ງຕັ້ງໃຫ້ໄປປະຈໍາການພາກສະໜາມ ຕ້ອງປະກອບດ້ວຍເງື່ອນໄຂຕົ້ນຕໍ ດັ່ງນີ້:

1. ເປັນພະນັກງານ-ລັດຖະກອນ;
2. ມີຄວາມເຂົ້າໃຈຕໍ່ກົດໝາຍ ແລະ ລະບຽບການກ່ຽວກັບແຮ່ທາດໂດຍພື້ນຖານ;
3. ມີຄວາມເຂົ້າໃຈ ແລະ ສາມາດສັງລວມບັນຫາຕ່າງໆຂອງວຽກງານໄດ້;
4. ມີຄວາມຫ້າວຫັນ ແລະ ຊອກຮູ້ຮໍ່າຮຽນ ໃນພາກສະໜາມ, ເຄົາລົບ ແລະ ຈັດຕັ້ງປະຕິບັດລະບຽບການຂອງບໍລິສັດໄດ້;
5. ມີສຸຂະພາບແຂງແຮງດີ.

**ມາດຕາ 6 ການປະສານສົມທົບ**

ພະນັກງານ-ລັດຖະກອນ ທີ່ປະຈຳພາກສະໜາມ ຕ້ອງປະສານສົມທົບກັບໜ່ວຍງານທີ່ກ່ຽວຂ້ອງຂອງລັດ ແລະ ບໍລິສັດ ເພື່ອເກັບກຳຂໍ້ມູນ ການຈັດຕັ້ງປະຕິບັດວຽກງານຂອງໂຄງການຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ ຕາມແບບຟອມທີ່ກົມຄຸ້ມຄອງບໍ່ແຮ່ກຳນົດໄວ້ ແລະ ເຂົ້າຮ່ວມກອງປະຊຸມ ວິທະຍາສາດ, ເຕັກນິກ-ວິຊາການ, ກອງປະຊຸມຂອງຊຸມຊົນອ້ອມຂ້າງໂຄງການ ຫຼື ປະຊຸມຂອງອົງການຈັດຕັ້ງມະຫາຊົນ.

**ມາດຕາ 7 ການລາຍງານ**

ພະນັກງານ-ລັດຖະກອນຜູ້ປະຈຳການພາກສະໜາມ ຕ້ອງລາຍງານໜ້າວຽກທີ່ກຳນົດໄວ້ໃນມາດຕາ 4 ຂອງຂໍ້ຕົກລົງສະບັບນີ້ໃຫ້ກົມຄຸ້ມຄອງບໍ່ແຮ່ ແລະ ຂະແໜງການທີ່ກ່ຽວຂ້ອງ ປະຈຳອາທິດ, ປະຈຳເດືອນ, ປະຈຳງວດ ແລະ ປະຈຳປີ ຕາມແບບຟອມ ທີ່ກົມຄຸ້ມຄອງບໍ່ແຮ່ໄດ້ວາງອອກ;

ໃນກໍລະນີມີເຫດການສຸກເສີນ ພະນັກງານ-ລັດຖະກອນ ຜູ້ປະຈຳການພາກສະໜາມ ຕ້ອງຮີບຮ້ອນລາຍງານເຫດການດັ່ງກ່າວ ໃຫ້ກົມຄຸ້ມຄອງບໍ່ແຮ່ ແລະ ຂະແໜງການທີ່ກ່ຽວຂ້ອງ;

ພາຍຫຼັງສຳເລັດການປະຈຳການພາກສະໜາມແລ້ວ ຜູ້ກ່ຽວຕ້ອງລາຍງານສະພາບການເຄື່ອນໄຫວວຽກງານຂອງຕົນໃນພາກສະໜາມຜ່ານມາ ພ້ອມທັງສະເໜີ ດ້ານດີ, ຂໍ້ຄົງຄ້າງ, ຂໍ້ສະເໜີ ແລະ ວິທີການແກ້ໄຂ.

**ມາດຕາ 8 ການອຳນວຍຄວາມສະດວກ**

ບໍລິສັດ, ລັດວິສາຫະກິດ ທີ່ດຳເນີນການຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ ຕ້ອງອຳນວຍຄວາມສະດວກ ແລະ ນະໂຍບາຍອື່ນໆ ທີ່ຈຳເປັນໃຫ້ພະນັກງານ-ລັດຖະກອນ ຜູ້ປະຈຳການພາກສະໜາມ ເປັນຕົ້ນ: ການເດີນທາງ, ສະຖານທີ່ພັກເຊົາ, ອາຫານ, ຢາປົວພະຍາດ, ຄ່າແຮງງານ, ເຄື່ອງຮັບໃຊ້ (ຄອມພີວເຕີ, ອຸປະກອນປ້ອງກັນໄພແຮງງານ...), ຫ້ອງການ ປະຈຳພາກສະໜາມ ແລະ ອື່ນໆ.

ບໍລິສັດຕ້ອງລາຍງານການຈັດຕັ້ງປະຕິບັດວຽກງານ ການຂຸດຄົ້ນ, ການປຸງແຕ່ງ ແລະ ວຽກອື່ນໆ ທີ່ເຫັນວ່າຈຳເປັນໃຫ້ ພະນັກງານ-ລັດຖະກອນ ປະຈຳພາກສະໜາມ ປະຈຳວັນ, ປະຈຳອາທິດ, ປະຈຳເດືອນ.

**ມາດຕາ 9 ການຖ່າຍທອດບົດຮຽນ**

ພະນັກງານ-ລັດຖະກອນ ທີ່ປະຈຳການພາກສະໜາມ ຕ້ອງຖ່າຍທອດບົດຮຽນ ແລະ ວຽກງານທີ່ຕົນເອງຮັບຜິດຊອບ ໃຫ້ຜູ້ທີ່ຈະປ່ຽນແທນ ໃຫ້ຮັບຮູ້ ແລະ ເຂົ້າໃຈ ໜ້າວຽກທີ່ຈະຕ້ອງສືບຕໍ່ຈັດຕັ້ງປະຕິບັດ.

ພະນັກງານ-ລັດຖະກອນ ທີ່ໄດ້ເຂົ້າຮ່ວມປະຈຳການພາກສະໜາມ ພາຍຫຼັງສຳເລັດແລ້ວ ຕ້ອງຖ່າຍທອດບົດຮຽນທີ່ຖອດຖອນໄດ້, ຄວາມຊຳນານງານດ້ານເຕັກນິກ-ເຕັກໂນໂລຊີ ໃຫ້ເພື່ອນຮ່ວມງານພາຍໃນກົມກອງຂອງຕົນ.

**ມາດຕາ 10 ກຳນົດເວລາ**

ການປະຈຳການພາກສະໜາມ ຂອງພະນັກງານ-ລັດຖະກອນ ທີ່ມີເງື່ອນໄຂຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 5 ຂອງຂໍ້ຕົກລົງສະບັບນີ້ ມີກຳນົດເວລາ ສອງເດືອນຕໍ່ຄັ້ງ.

**ມາດຕາ 11 ຂໍ້ຫ້າມສຳລັບພະນັກງານ-ລັດຖະກອນ ປະຈຳພາກສະໜາມໂຄງການ**

ຫ້າມພະນັກງານ-ລັດຖະກອນ ມີພຶດຕິກຳ ດັ່ງນີ້:

1. ຍັ້ງຢືນ ຫຼື ຮັບປະກັນບັນຫາຕ່າງໆ ໂດຍບໍ່ໄດ້ຮັບການອະນຸຍາດ ຫຼື ໄດ້ຮັບມອບໝາຍຈາກກົມຄຸ້ມຄອງບໍ່ແຮ່, ກະຊວງພະລັງງານ ແລະ ບໍ່ແຮ່;

2. ຕັດສິນໃຈ ຫຼື ສັ່ງການໂດຍກົງຕໍ່ການດຳເນີນໂຄງການຂອງບໍລິສັດ ຫຼື ຜູ້ຮັບເໝົາ, ຜູ້ຮັບເໝົາ ຍ່ອຍ ໃຫ້ປະຕິບັດຕາມຄຳເຫັນຂອງຕົນຕໍ່ວຽກໂຄງການ;

3. ຮຽກຮ້ອງເອົາຜົນປະໂຫຍດ ຫຼື ຂໍ້ສະດວກຕ່າງໆຂອງຕົນ ຈາກບໍລິສັດ;

4. ຫຼິ້ນການພະນັນທຸກຊະນິດ, ດື່ມສິ່ງຂອງມຶນເມົາທີ່ຂັດຕໍ່ລະບຽບຂອງບໍລິສັດ;

5. ເປີດເຜີຍຄວາມລັບຂອງລັດ ແລະ ບໍລິສັດ ຫຼື ຄວາມລັບທາງດ້ານການຄ້າ ແລະ ເຕັກນິກວິຊາການ ກ່ຽວກັບແຮ່ທາດ;

6. ໃຊ້ສິດ, ໜ້າທີ່ ເກີນຂອບເຂດ ຊຶ່ງກໍ່ໃຫ້ເກີດຄວາມເສຍຫາຍ;

7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 12 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມຄຸ້ມຄອງບໍ່ແຮ່, ພະແນກພະລັງງານ ແລະ ບໍ່ແຮ່ ແຂວງ/ນະຄອນຫຼວງ ແລະ ຫ້ອງການພະລັງງານ ແລະ ບໍ່ແຮ່ ເມືອງ/ນະຄອນ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

ບໍລິສັດ, ລັດວິສາຫະກິດ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງຈົ່ງຮັບຮູ້, ໃຫ້ການຮ່ວມມື ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 13 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ

ປອ. ດາວວົງ ພອນແກ້ວ